# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນຈັນ ວັນທີ 20 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈຳວັນຈັນ ວັນທີ 20 ກັນຍາ ປີ 2021**.

ຂ້າພະເຈົ້າ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງ ສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ, ໃນທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 19 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **5,117** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **214** ຄົນ:

- **ກໍລະນີນໍາເຂົ້າ ມີ 52 ຄົນ** ຈາກ ແຂວງ ສະຫວັນນະເຂດ 32 ຄົນ, ສາລະວັນ 12 ຄົນ, ຈໍາປາສັກ 4 ຄົນ, ນະຄອນຫຼວງວຽງຈັນ 2 ຄົນ ແລະ ຄໍາມ່ວນ 2 ຄົນ ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າມາຕາມຈຸດຜ່ານແດນສາກົນ.
- **ສໍາລັບ ການຕິດເຊື້ອໃນຊຸມຊົນ ມີ 162 ຄົນ ລາຍລະອຽດ ດັ່ງຕໍ່ໄປນີ້:**
  - **ນະຄອນຫຼວງ 77 ຄົນ:**

1). ກຸ່ມໂຮງງານ ອານພິ ລາວ 42 ຄົນ

- ເກັບຕົວຢ່າງ ຢູ່ສູນດົງໂດກ ໃຫ້ຜົນບວກ 40 ຄົນ

- ເກັບຢູ່ໂຮງງານ 2 ຄົນ

2). ຈຸດເກັບ ຕົວຢ່າງ ຈາກບຶງຂະຫຍອງ : ໃຫ້ຜົນບວກ 29 ຄົນ

- **ຈຳປາສັກ 33 ຄົນ:** ເມືອງບາຈຽງ 3 ຄົນ ແລະ ນະຄອນປາກເຊ 30 ຄົນ

- **ຄຳມ່ວນ 28 ຄົນ:**

  - ທ່າແຂກ 11 ບ້ານ

  - ບົວລະພາ 1 ບ້ານ

  - ຫີນບູນ 1 ບ້ານ

- **ບໍ່ແກ້ວ 12 ຄົນ:** ທັງ 12 ຄົນ ແມ່ນຢູ່ ເຂດພິເສດຂອງເມືອງຕົ້ນເຜີ້ງ (ລາວ 01 ຄົນ, ພະມ້າ 06 ຄົນ ແລະ ຈີນ 05 ຄົນ).

- **ສະຫວັນນະເຂດ 9 ຄົນ:**

  - ນັກສຶກສາແພດ ມີ 02 ຄົນ
  - ບ້ານໂນນສະຫວາດ, ບ້ານບ້ານສະໜາມໄຊ, ບ້ານໄຊຍະພູມ ແລະ ບ້ານນາເຕີ້ຍ, ບ້ານລະ 01 ຄົນ
  - ບ້ານທ່າເດື່ອ, ເມືອງສອງຄອນ ມີ 01 ຄົນ
  - ຄົນຫວຽດ ມີ 02 ຄົນ, ແຕ່ບໍ່ຮູ້ແຫລ່ງທີ່ມາ ຂອງການຕິດເຊື້ອ

- **ຊຽງຂວາງ 2 ຄົນ:** ທັງສອງຄົນເປັນເອື້ອຍນ້ອງກັນ (ເພດຍິງ, ອາຍຸ 42 ປີ ອາຊີບ: ກຳມະກອນຕັດຫຍິບໂຮງງານອານປີລາວ ແລະ ເພດຍິງ, ອາຍຸ 34 ປີ, ອາຊີບ: ຄ້າຂາຍ). ເຫດຜົນເດີນທາງໄປແຂວງຊຽງຂວາງ ຍ້ອນວ່າໄປສິ່ງສະການພໍ່ເສຍຊີວິດ ຢູ່ບ້ານທໍ່ສີມ, ເມືອງຜາໄຊ.
  - ວັນທີ 14 ກັນຍາ 2021 ໄດ້ເດີນທາງຈາກນະຄອນຫລວງວຽງຈັນ ໄປຮອດແຂວງຊຽງຂວາງ
  - ງານສົບຈັດແຕ່ວັນທີ 14-17 ກັນຍາ 2021
  - ວັນທີ 17 ກັນຍາ 2021 ໄດ້ສິ່ງສະການພໍ່

- ທາງແຂວງຊຽງຂວາງ ໄດ້ປະກາດ ໃຫ້ພໍ່ແມ່ປະຊາຊົນ ຜູ້ໃດໄດ້ຮ່ວມງານສົບ ໃຫ້ໄປ ເກັບຕົວຢ່າງ ພ້ອມທັງຈຳກັດບໍລິເວນ

- **ບໍລິຄຳໄຊ 1 ຄົນ:** ເປັນຄົນທີ່ມີອາການທາງລະບົບຫາຍໃຈ

- ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

- ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **19,399 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **4,255** ຄົນ.

- **ບ້ານໃໝ່ທີ່ກຳນົດເປັນເຂດແດງ ໃນນະຄອນຫຼວງວຽງຈັນ ມີ 08 ບ້ານ:**

| **ເມືອງ** | **ບ້ານ** | **ຈຳນວນ** | **ຈຳນວນ** | ***ວັນເລີ່ມຕົ້ນ*** | ***ວັນທີສິ້ນສຸດ*** |
|---|---|---|---|---|---|

| | | ປະຊາກອນ | ກໍລະນີໃໝ່ | *ມັບເປັນເຂດແດງ* | *ການເປັນເຂດແດງ* |
|---|---|---|---|---|---|
| ສີໂຄດຕະບອງ | ທົ່ງປົ່ງ | 4,994 | 2 | 19/9/2021 | 3/10/2021 |
| | ວຽງຄໍາ | 4,789 | 2 | 19/9/2021 | 3/10/2021 |
| | ໜອງແຕ່ງໃຕ້ | 2,008 | 3 | 19/9/2021 | 3/10/2021 |
| | ໜອງດ້ວງ | 1,491 | 2 | 19/9/2021 | 3/10/2021 |
| | ດົງນາທທອງ | 2,173 | 2 | 19/9/2021 | 3/10/2021 |
| ໄຊເສດຖາ | ໂພນທັນ | 3,009 | 8 | 19/9/2021 | 3/10/2021 |
| ນາຊາຍທອງ | ນາສ້ຽວ | 4,388 | 2 | 19/9/2021 | 3/10/2021 |
| ໄຊທານີ | ສະພັງມຶກ | 2,456 | 5 | 19/9/2021 | 3/10/2021 |

- **ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19** ສຳລັບ **ນະຄອນຫຼວງວຽງຈັນ ແມ່ນມີ ສອງຈຸດ: 1) ຈຸດເກັບຕົວຢ່າງ ເດີ່ນກິລາໃນຮົ່ມ ບຶງຂະຫຍອງ, 2)** ຈຸດ **ເກັບຕົວຢ່າງ ໂຮງຮຽນມໍປາຍສີໂຄດ.** ເຊິ່ງທັງສອງບ່ອນເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.
- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກຳນົດໄວ້ ຫຼື ທີມງານໜ່ວຍເຄື່ອນທີ່ ທີ່ລົງເກັບຕົວຢ່າງ ໃນເຂດທີ່ມີການລະບາດໃນຊຸມຊົນ.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 19 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **923** ຄົນ.
- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **119** ສູນ ແລະ **55** ໂຮງແຮມ, ມີຜູ້ຈຳກັດບໍລິເວນ **7,188** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ **229,260,555** (349,947 ໃໝ່), ເສຍຊີວິດທັງໝົດ 4**,704,927** (5,708 ໃໝ່), ປິ່ນປົວຫາຍດີ **205,879,943** (496,917 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ

ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ **ສະຫະລັດອາເມລິກາ, ອິນເດຍ** ແລະ **ບຣາຊິວ.**

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ **ປະເທດໄທ** ເຊິ່ງມີຜູ້ຕິດເຊື້ອໃໝ່ 13,567 ຄົນ ແລະ ເສຍຊີວິດໃນມື້ດຽວ 117 ຄົນ, ຮອງລົງມາແມ່ນ **ສສ ຫວຽດນາມ** ມີລາຍງານຜູ້ຕິດເຊື້ອໃໝ່ 10,040 ຄົນ ແລະ ເສຍຊີວິດໃນມື້ດຽວ 233 ຄົນ.

➢ **ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ປັດຈຸບັນ ຕົວເລກຜູ້ຕິດເຊື້ອໃນຊຸມຊົນ ຢູ່ສປປ ລາວເຮົາ ມີທ່າອ່ຽງເພີ່ມຂື້ນໃນແຕ່ລະວັນ ສາເຫດຂອງການຕິດເຊື້ອກໍ່ມາຈາກ ແຮງງານທີ່ເຮັດວຽກຢູ່ໂຮງງານ ບ້ານໜອງທາເໜືອ, ເມືອງຈັນທະບູລີ ເຊິ່ງມີຄວາມສ່ຽງສູງ ທີ່ຈະເກີດການລະບາດຮອບໃໝ່ ໃນນະຄອນຫຼວງວຽງຈັນ. ຕໍ່ກັບສະພາບການດັ່ງກ່າວ, ຄະນະສະເພາະກິດ ຈຶ່ງໄດ້ອອກຄຳສັ່ງ, ແຈ້ງການ ເພື່ອຄວບຄຸມສະພາບການລະບາດໃຫ້ຢຸດຕິລົງໂດຍໄວ, ເພີ່ມທະວີເຝົ້າລະວັງຢູ່ຕາມສະຖານທີ່ສ່ຽງຕ່າງໆ, ເກັບຕົວຢ່າງກວດໃຫ້ຫຼາຍຂື້ນ ແລະ ຊອກຄົ້ນຫາຜູ້ສຳຜັດໃກ້ຊິດຢ່າງຮີບດ່ວນ ເພື່ອສະກັດກັ້ນການລະບາດບໍ່ໃຫ້ຂະຫຍາຍເປັນວົງກວ້າງ ແລະ ແຜ່ອອກໄປສູ່ແຂວງໃກ້ຄຽງ. ພ້ອມດຽວກັນນັ້ນ ຖ້າທ່ານຮູ້ສຶກວ່າ ຜູ້ສຳຜັດໃກ້ຊິດ ຫຼື ນອນຢູ່ໃນກຸ່ມສ່ຽງ ຕ້ອງຈຳກັດບໍລິເວນຕົນເອງທັນທີ ແລະ ຮີບຮ້ອນໄປກວດຊອກຫາເຊື້ອ, ເຖິງແມ່ນວ່າ ຜົນກວດຂອງທ່ານຈະເປັນລົບກໍ່ຕາມ ຈຳເປັນຕ້ອງໄດ້ສືບຕໍ່ຈຳກັດບໍລິເວນຕົນເອງ ຈົນ

ຄົບກຳນົດ 14 ວັນ ຫຼື ຖ້າຫາກມີອາການຜິດປົກກະຕິ ເຊັ່ນ: ໄຂ້, ໄອ, ເຈັບຄໍ, ເຈັບໜ້າເອິກ, ນ້ຳມູກໄຫຼ, ດັງບໍ່ໄດ້ກິ່ນ, ຫຼື ກິນອາຫານບໍ່ໄດ້ລົດຊາດ ໃຫ້ກັບມາກວດຄືນ ຫຼື ໂທປຶກສາສາຍດ່ວນ 165 – 166 ເພື່ອຂໍຄຳແນະນຳ;

- ພ້ອມກັນນັ້ນ ຂໍແຈ້ງມາຍັງບັນດາຜູ້ປະກອບການ, ໂຮງງານຕ່າງໆ ຈົ່ງໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ທີມງານຂອງພວກເຮົາ ໃນການລົງໄປປະເມີນຄວາມສ່ຽງ, ການກວດຊອກຫາເຊື້ອ, ສຳພາດກຳລະນີຕິດເຊື້ອ ແລະ ຊອກຄົ້ນຫາຜູ້ສຳຜັດໃກ້ຊິດ, ການອະນາໄມຂ້າເຊື້ອ ແລະ ອື່ນໆ ທັງໝົດນີ້ ກໍ່ແມ່ນ ເພື່ອຈຳກັດຂອບເຂດການລະບາດບໍ່ໃຫ້ແຜ່ຂະຫຍາຍກວ້າງອອກໄປຕື່ມອີກ;
- ຂໍຄວາມຮ່ວມມືຈາກບັນດາທ່ານ ເມື່ອທ່ານໄດ້ຮັບຂໍ້ມູນຂ່າວສານຈາກສື່ສັງຄົມອອນລາຍຕ່າງໆ ຄວນວິເຄາະກັ່ນກອງຂໍ້ມູນຢ່າງລະອຽດກ່ອນວ່າ ແມ່ນຂໍ້ມູນຄວາມຈິງ ຫຼື ຂໍ້ມູນ

ປອມ ເພາະການຮັບຮູ້ ຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ແມ່ນຄວາມຈິງ ແລ້ວສິ່ງຕໍ່ໃຫ້ຄົນອ້ອມຂ້າງ ນັ້ນ ເປັນການສ້າງຄວາມຫຍຸ້ງຍາກສັບສົນ ແລະ ແຕກຕື່ນໃນສັງຄົມ;

- ອີກເທື່ອນຶ່ງ ຂໍຮຽກຮ້ອງມາຍັງທຸກພາກສ່ວນໃນສັງຄົມ ພ້ອມໃຈກັນປະຕິບັດມາດຕະການ ທີ່ຄະນະສະເພາະກິດວາງອອກ ຢ່າງເຄັ່ງຄັດ ເຊັ່ນ: ບໍ່ໂຮມຊຸມນຸມກັນ, ບໍ່ຊຸມແຊວກັນເປັນ ກຸ່ມ, ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ການຮັກສາໄລຍະຫ່າງ, ໃສ່ຜ້າປິດປາກ-ດັງ, ລ້າງມືເລື້ອຍໆດ້ວຍນໍ້າສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70% ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ, ອະນາໄມຂ້າເຊື້ອຈຸດທີ່ມີຄວາມສ່ຽງ ເຊັ່ນ: ຮາວຂັ້ນໃດ - ບ່ອນຈັບປະຕູ - ລີໂມດ ອື່ນໆ, ແລະ ອີກຢ່າງນຶ່ງທີ່ສຳຄັນ ກໍ່ຄື ການ

ໄປຮັບວັກຊີນ ເພື່ອສ້າງພູມຄຸ້ມກັນໝູ່ ເຊິ່ງສາມາດປ້ອງການຄວາມຮຸນແຮງຂອງພະຍາດ ແລະ ການເສຍຊີວິດໄດ້ ຖ້າຫາກມີການຕິດເຊື້ອ;

- **ອີກປະການນຶ່ງ ໃນງານບຸນປະເພນີ ບຸນຫໍ່ເຂົ້າສະຫຼາກ** ທີ່ຈະມາເຖິງໃນວັນທີ ອັງຄານ ທີ 21 ກັນຍາ ນີ້ແມ່ນຫ້າມຈັດ ບໍ່ວ່າຈະເປັນ ການໃສ່ບາດ ຫຼື ວຽນທຽນ ໂດຍສະເພາະ ບັນດາ ບ້ານ-ເມືອງ-ແຂວງ ທີ່ມີການລະບາດໃນຊຸມຊົນ. ການປະຕິບັດນີ້ ກໍ່ແມ່ນເພື່ອໃຫ້ພວກເຮົາທຸກຄົນປອດໄພຈາກພະຍາດໂຄວິດ-19.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈໍາຈັນ ວັນທີ 20 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ທີ່ໄດ້ຕິດຕາມຮັບຟັງ ແລະ ຮັບຊົມ.**

**(ຂໍຂອບໃຈ)**